# ຮ້ານແລກປ່ຽນ-ໂອນເງິນດ່ວນ ເຊື່ອມຊຶມວຽກງານຕ້ານການຟອກເງິນ



ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ຈັດຕັ້ງການເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ແລະ ບັນດານິຕິກຳທີ່ຕິດພັນໃຫ້ແກ່ບັນດາຮ້ານແລກປ່ຽນເງິນຕາ ແລະ ບໍລິສັດໂອນເງິນດ່ວນໃນວັນທີ 17 ທັນວາ 2020 ທີ່ຫ້ອງປະຊຸມສະຖາບັນການທະນາຄານ ໂດຍການເຂົ້າຮ່ວມຂອງທ່ານນາງ ຂັນທະລີ ວົງໄຊຍະລາດ ຮອງຫົວໜ້າ ສຕຟງ; ພ້ອມນີ້, ກໍ່ມີການເຂົ້າຮ່ວມບັນດາຜູ້ປະກອບການ-ເຈົ້າຂອງທຸລະກຳການເງິນຂອງ 2 ພາກສ່ວນ ແລະ ມີນັກວິທະຍາກອນຈາກ ສຕຟງ.

ການເຜີຍແຜ່ໃນຄັ້ງນີ້ ກໍ່ເພື່ອເຮັດໃຫ້ບັນດາບັນດາຜູ້ປະກອບການ-ເຈົ້າຂອງທຸລະກຳການເງິນຢູ່ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດໂອນເງິນດ່ວນມີຄວາມຮັບຮູ້, ເຂົ້າໃຈກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ການປະເມີນຄວາມສ່ຽງຕາມຫຼັກການບໍລິຫານຄວາມສ່ຽງ (RBA) ດ້ານການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ກົນໄກການປະສານງານລະຫວ່າງເຈົ້າໜ້າທີ່ກັບຮ້ານແລກປ່ຽນເງິນຕາ ແລະ ບໍລິສັດໂອນເງິນດ່ວນ; ອີກຈຸດປະສົງໜຶ່ງທີ່ຮີບດ່ວນແມ່ນສະເໜີໃຫ້ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດໂອນເງິນດ່ວນ ສະໜອງຂໍ້ມູນເພື່ອນຳໄປເຮັດການປະເມີນຕາມຫຼັກການບໍລິຫານຄວາມສ່ຽງ.

ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍເປັນວຽກງານທີ່ມີຄວາມສຳຄັນຕໍ່ສະພາບການດຳເນີນເສດຖະກິດໃນປະເທດ; ສປປ ລາວ ກໍ່ຄືລັດຖະບານເຮົາໄດ້ໃຫ້ຄວາມສຳຄັນໃນວຽກງານດັ່ງກ່າວ ໂດຍສ້າງຕັ້ງຄະນະກຳມະການລະດັບຊາດ ໂດຍປະກອບມີຮອງນາຍົກລັດຖະມົນຕີ ເປັນປະທານ; ບັນດາລັດຖະມົນຕີ-ຮອງລັດຖະມົນຕີຈາກ 13 ກະຊວງ/ທຽບເທົ່າເຂົ້າຮ່ວມໃນຄະນະ ແນໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວບົນພື້ນຖານເງື່ອນໄຂ 40 ຂໍ້ແນະນຳຂອງສາກົນທີ່ ສປປ ລາວ ເປັນພາຄີ. ໃນ

ຜ່ານມາ ສປປ ລາວ ໄດ້ຮັບການປະເມີນຜົນຮອບດ້ານຄັ້ງທຳອິດ ໃນປີ 2010 ຊຶ່ງຜົນການປະເມີນໃນຄັ້ງນັ້ນແມ່ນຕົກຢູ່ໃນບັນຊີເທົາ ເຮັດໃຫ້ ສປປ ລາວ ພົບຄວາມຫຍຸ້ງຍາກຫຼາຍດ້ານ. ເຖິງຢ່າງໃດກໍດີ, ສປປ ລາວ ໄດ້ສູ້ຊົນ, ປັບປຸງແກ້ໄຂຂໍ້ຄົງຄ້າງຕ່າງໆໂດຍໄດ້ອອກບັນດານິຕິກຳທີ່ຕິດພັນຈຳນວນ 24 ສະບັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນໃຫ້ສອດຄ່ອງຕາມມາດຖານສາກົນ, ສ້າງກົນໄກ ແລະ ຂັ້ນຕອນຕ່າງໆ ເພື່ອນຳໄປປະຕິບັດໃຫ້ເກີດປະສິດທິຜົນຕາມນິຕິກຳທີ່ວາງອອກໄດ້ຈຳນວນໜຶ່ງ ຈຶ່ງເຮັດໃຫ້ ສປປ ລາວ ສາມາດອອກຈາກບັນຊີເທົາຂອງສາກົນໃນປີ 2017. ຫຼັງຈາກນັ້ນ, ກໍ່ມີການດຳເນີນການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍສຳເລັດໃນກາງປີ 2018 ຊຶ່ງສາມາດກຳນົດໄດ້ໄພຂົ່ມຂູ່ຂອງການຟອກເງິນ, ຂະແໜງການທຸລະກິດທີ່ມີຄວາມສ່ຽງຈະຖືກສວຍໃຊ້ໃນຂະບວນການຟອກເງິນ ແລະ ເລັ່ງແກ້ໄຂຂໍ້ຄົງຄ້າງທີ່ໄດ້ຈາກຜົນການປະເມີນ ເພື່ອປັບປຸງປະສິດທິພາບຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງ ແລະ ຮັບປະກັນໄດ້ຕາມມາດຖານສາກົນຍິ່ງຂຶ້ນ.

ເພື່ອກະກຽມການປະເມີນຜົນຮອບດ້ານ ຄັ້ງທີ 2 ໃນສົກປີ 2020-2021, ລັດຖະບານໄດ້ສ້າງຕັ້ງຄະນະສະເພາະກິດຂຶ້ນ ໂດຍມີຮອງນາຍົກລັດຖະມົນຕີ, ລັດຖະມົນຕີ/ຮອງລັດຖະມົນຕີ ຈຳນວນ 25 ທ່ານປະກອບຢູ່ໃນຄະນະກຳມະການ ແລະ ໄດ້ແບ່ງເປັນ 4 ກຸ່ມວຽກຄື: ວຽກງານເຜີຍແຜ່ ແລະ ເຊື່ອມຊຶມ, ວຽກງານນິຕິກຳ ແລະ ກົນໄກ, ວຽກງານຄຸ້ມຄອງ ແລະ ວຽກງານການດຳເນີນຄະດີ. ໃນນັ້ນ, ມີ ສຕຟງ ເປັນກອງເລຂາທີ່ເຮັດວຽກໃນການປະສານງານ ແລະ ມາຮອດປະຈຸບັນ 4 ກຸ່ມວຽກດັ່ງກ່າວໄດ້ດຳເນີນການຕາມພາລະບົດບາດ, ໜ້າທີ່ຂອງຕົນຢ່າງເປັນເຈົ້າການ, ມີຄວາມຮັບຜິດຊອບສູງ ແລະ ມີຜົນຄືບໜ້າດີຂຶ້ນຕາມລຳດັບ.

ສະນັ້ນ, ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວດຳເນີນໄປດ້ວຍຜົນສຳເລັດນັ້ນ ມັນຈຶ່ງເລັ່ງທວງໃຫ້ທຸກພາກສ່ວນໃນສັງຄົມ ໂດຍສະເພາະບັນດາຮ້ານແລກປ່ຽນເງິນຕາ ແລະ ບໍລິສັດໂອນເງິນດ່ວນ ຕ້ອງໄດ້ສະໜອງຂໍ້ມູນໃຫ້ແກ່ອົງການກ່ຽວຂ້ອງ ໂດຍສະເພາະແມ່ນໃຫ້ລາຍງານຕໍ່ ສຕຟງ ເພື່ອນຳໄປເຮັດການປະເມີນຕາມຫຼັກການບໍລິຫານຄວາມສ່ຽງ; ພ້ອມນີ້, ກໍ່ເພີ່ມທະວີຄວາມເປັນເຈົ້າການໃນຖານະຜູ້ເຮັດວຽກງານແລກປ່ຽນ ແລະ ໂອນເງິນດ່ວນ ຕ້ອງມີຄວາມຮັບຜິດຊອບຂອງຕົນໃຫ້ສູງຂຶ້ນກ່ວາເກົ່າ ແນໃສ່ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ກໍ່ຄືການປະຕິບັດພັນທະໜ້າທີ່ຂອງຕົນຕໍ່ສາກົນ ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍ່ຄືຮັບປະກັນສະຖຽນລະພາບທາງດ້ານເສດຖະກິດ, ການເງິນ-ເງິນຕາ ໃຫ້ເປັນລະບຽບຮຽບຮ້ອຍ, ໝັ້ນຄົງ ຕາມກົດໝາຍ ແລະ ນິຕິກຳຕ່າງໆທີ່ຕິດພັນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ**